ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ທະນາຄານແຫ່ງ ສປປ ລາວ ແລະ ອົງການຮ່ວມມືການເງິນສາກົນ ຈັດສຳມະນາ ໃນຫົວຂໍ້ "ການເງິນສີຂຽວ"




ໃນວັນທີ 15 ຕຸລາ 2024, ທີ່ໂຮງແຮມ ລາວ ພລາຊ່າ, ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ອົງການຮ່ວມມືການເງິນສາກົນ (IFC) ໄດ້ຮ່ວມກັນຈັດງານສຳມະນາ ໃນຫົວຂໍ້ "ການເງິນສີຂຽວ" ພາຍໃຕ້ໂຄງການ ການເງິນສີຂຽວຢູ່ ສປປ ລາວ ໄລຍະທີ II (ປີ 2023-2027), ໂດຍການເປັນປະທານຮ່ວມລະຫວ່າງ ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ນາງ Christina Ongoma, ຫົວໜ້າໜ່ວຍງານໃຫ້ຄຳປຶກສາ ແລະ ເຮັດວຽກຮ່ວມກັບສະຖາບັນການເງິນ, ຂົງເຂດອາຊີຕາເວັນອອກ ແລະ ປາຊີຟິກ, ອົງການ IFC. ມີຜູ້ເຂົ້າຮ່ວມທີ່ມາຈາກບັນດາກົມກ່ຽວຂ້ອງຈາກ ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ລວມທັງໝົດຈຳນວນ 152 ທ່ານ.

ສືບເນື່ອງຈາກການຮ່ວມກັນລົງນາມໃນສັນຍາການຮ່ວມມື ພາຍໃຕ້ໂຄງການການເງິນສີຂຽວຢູ່ ສປປ ລາວ ໄລຍະທີ II ໃນເດືອນທັນວາ 2023, ເພື່ອເພີ່ມທະວີການສົ່ງເສີມວຽກງານການເງິນສີຂຽວຢູ່ ສປປ ລາວ, ທັງສອງຝ່າຍຈຶ່ງໄດ້ຮ່ວມກັນຈັດສຳມະນາຄັ້ງນີ້ຂຶ້ນເພື່ອລົງເລິກເຮັດວຽກ ແລະ ຈັດຕັ້ງຜັນຂະຫຍາຍສັນຍາການຮ່ວມມືໄລຍະທີ II ໃຫ້ມີໝາກຜົນຫຼາຍຍິ່ງຂຶ້ນ. ເຊິ່ງຈຸດປະສົງຂອງງານສຳມະນາໃນຄັ້ງນີ້ ແມ່ນເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈທີ່ເລິກເຊິ່ງ ກ່ຽວກັບຫຼັກການການຄຸ້ມຄອງວຽກງານການເງິນສີຂຽວທີ່ສຳຄັນໃນ ສປປ ລາວ ແລະ ທ່າອ່ຽງດ້ານການເງິນທີ່ມີຄວາມຍືນຍົງ, ສີຂຽວ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ ລວມເຖິງການພັດທະນາຜະລິດຕະພັນສີຂຽວ-ຍືນຍົງ ໃຫ້ແກ່ບັນດາຜູ້ເຂົ້າຮ່ວມ ແລະ ທັງເປັນເວທີໃນການແລກປ່ຽນບົດຮຽນຮ່ວມກັນໃນບັນດາຫົວຂໍ້ທີ່ກ່ຽວຂ້ອງເພື່ອເປັນເວທີໃນການແລກປ່ຽນບົດຮຽນ, ຄວາມຮູ້, ປະສົບການ ແລະ ແລກປ່ຽນທັດສະນະຮ່ວມກັນລະຫວ່າງຜູ້ບັນຍາຍ ແລະ ຜູ້ເຂົ້າຮ່ວມ.













ງານສຳມະນາດັ່ງກ່າວ ແມ່ນໄດ້ດຳເນີນໄປເປັນເວລາໜຶ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ, ຜູ້ເຂົ້າຮ່ວມມີຄວາມເອົາໃຈໃສ່ໃນການຮັບຟັງ, ສົນທະນາແລກປ່ຽນຄຳເຫັນຢ່າງກົງໄປກົງມາ ແລະ ບັນລຸໝາກຜົນອັນຈົບງາມ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ຂ່າວ: ກົມຮ່ວມມືສາກົນ.

ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ.

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ